# Examination

ຄຳຖາມ:

1. ຄວາມໝາຍຂອງເຂດເສດຖະກິດພິເສດ ແລະ ເສດຖະກິດສະເພາະມີຄືແນວໃດ?
2. ການສ້າງຕັ້ງເຂດເສດຖະກິດພິເສດຕ້ອງປະຕິບັດຕາມຫຼັກການໃດແດ່?
3. ນະໂຍບາຍສົ່ງເສີມຕໍ່ຜູ້ພັດທະນາ ເຂດເສດຖະກິດພິເສດມີຄືແນວໃດ?

**ຄຳຕອບ:**

**ຄຳຕອບ: 1.** ເຂດເສດຖະກິດສະເພາະ ແມ່ນເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດທີ່ມີທີ່ຕັ້ງ, ມີສະພາບແວດລ້ອມດ້ານເສດຖະກິດ ສາມາດອຳນວຍຄວາມສະດວກ ແລະ ເປັນເອກະລາດ ໃນການດຳເນີນທຸລະກິດຫຼາຍກວ່າເຂດອື່ນ ໃນຂອບເຂດທົ່ວປະເທດ, ໂດຍສ້າງໃຫ້ມີພື້ນຖານໂຄງລ່າງ ດ້ານເສດຖະກິດ - ສັງຄົມ, ສະຖາບັນ ແລະ ອື່ນໆທີ່ຄົບຊຸດ ເພື່ອຍົກສູງຄວາມສາມາດແຂ່ງຂັນ ໃນການດຳເນີນທຸລະກິດ ຊຶ່ງຈະເປັນສິ່ງດຶງດູດຈິດໃຈໃຫ້ແກ່ການລົງທຶນຂອງທຸກພາກສ່ວນເຂົ້າໃນການພັດທະນາເຂດດັ່ງກ່າວ ເພື່ອໃຫ້ມີການພັດທະນາເສດຖະ ກິດໄວກວ່າເຂດອື່ນ. ການຕັ້ງຊື່ຂອງເຂດເສດຖະກິດສະເພາະ ແມ່ນອີງໃສ່ຄຸນລັກສະນະສະເພາະ ຂອງແຕ່ລະເຂດໃດໜຶ່ງ ທີ່ເໝາະສົມຕາມຄຸນລັກສະນະຂອງພື້ນຖານໂຄງລ່າງ ແລະ ສະຖາບັນ ທີ່ເອື້ອອຳນວຍໃນການດຳເນີນທຸລະກິດ, ການຜະລິດ ແລະ ການບໍລິການ ທີ່ມີຄວາມແຕກຕ່າງກັນໄປ ຕາມຄຸນລັກສະນະສະເພາະ ຂອງແຕ່ລະປະເພດ ທີ່ຕ້ອງການພັດທະນາ. ເຂດເສດຖະກິດສະເພາະ ໄດ້ຮັບນະໂຍບາຍສົ່ງເສີມສະເພາະ, ມີລະບົບເສດຖະກິດ-ການເງິນ ເປັນເຈົ້າຕົນເອງ, ມີສະພາບໍລິຫານເສດຖະກິດເປັນຜູ້ບໍລິຫານ ແລະ ຄຸ້ມຄອງ ຕາມກົນໄກຕາປະທັບດຽວ ແລະ ມີຫົວໜ່ວຍການດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການຈຳນວນໜຶ່ງ ຊຶ່ງມີການກຳນົດເຂດແດນຢ່າງຈະແຈ້ງ ແລະ ບໍ່ມີປະຊາຊົນດຳລົງຊີວິດຢູ່ໃນເຂດດັ່ງກ່າວ.

**ຄຳຕອບ: 2.**

1) ກຳນົດແຈ້ງວັດຖຸປະສົງຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
2) ກຳນົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
3) ເປັນເຂດທີ່ເໝາະສົມກັບວັດຖຸປະສົງຂອງແຕ່ລະເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
4) ກຳນົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
5) ມີນະໂຍບາຍສົ່ງເສີມທາງດ້ານເສດຖະກິດສະເພາະ;
6) ມີລະບົບບໍລິຫານດ້ານເສດຖະກິດທີ່ເປັນເອກະລາດຕາມແຕ່ລະເຂດ;
7) ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງລັດຖະບານ ຫຼື ອີງການປົກຄອງແຂວງ ຕາມການຕົກລົງຂອງ ລັດຖະບານ;
8) ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ການປົກປັກຮັກສິ່ງແວດລ້ອມພາຍໃນເຂດ;
9) ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສິ່ງເສີມ ແລະ ອະນຸລັກວັດທະນາທຳອັນດີງາມຂອງຊາດ.

ຄຳຕອບ: 3.

1) ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ, ຜູ້ພັດທະນາເຂດ ໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນດັ່ງນີ້: ນະໂຍບາຍດ້ານພາສີ, ສ່ວຍສາອາກອນກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ.

ຂະແໜງອຸດສາຫະກຳການຜະລິດ, ຂະແໜງບໍລິການ ການພັດທະນາອຸດສາຫະກຳການທ່ອງທ່ຽວ,ການບໍລິ ການທາງດ້ານສາທາລະນະສຸກ, ສຶກສາ, ກິລາ-ກາຍຍະກຳ ແລະ ການພັດທະນາອະສັງຫາລິມະຊັບ ໄດ້ຮັບນະໂຍບາຍ ສົ່ງເສີມດ້ານອາກອນກຳໄລ ໂດຍອີງຕາມເຂດທີ່ຕັ້ງຄື: ເຂດ 1 ຍົກເວັ້ນອາກອນກຳໄລ ສິບຫົກ ປີ, ເຂດ 2 ຍົກເວັ້ນອາກອນກຳໄລແປດປີ ພາຍຫຼັງສິ້ນສຸດໄລຍະຍົກເວັ້ນ ຈະໄດ້ເສຍ ສາມສິບຫ້າສ່ວນຮ້ອຍ (35%) ຂອງອັດຕາອາ ກອນກຳໄລ ຕາມທີ່

ໄດ້ກຳນົດໄວໃນກົດໝາຍ ວ່າດ້ວຍສ່ວຍສາອາກອນ ພາຍໃນກຳນົດຫ້າປີ, ຫຼັງຈາກນັ້ນ ໃຫ້ເສຍໃນອັດຕາຕາມທີ່ໄດ້ກຳນົດໄວໃນກົດໝາຍວ່າດ້ວຍສ່ວຍສາອາກອນ.

ການກໍ່ສ້າງເສັ້ນທາງ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ, ສວ່ນການກໍ່ສ້າງພື້ນຖານໂຄງລ່າງອື່ນໆແມ່ນໃຫ້ເສຍຫ້າສິບສວ່ນຮ້ອຍ (50%) ຂອງອັດຕາອາກອນມູນຄ່າເພີ່ມ ທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ.

ຜູ້ພັດທະນາ ຂພສ ຈະໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນແບບພິເສດ, ຊຶ່ງໂດຍທົ່ວໄປແລ້ວ, ນະໂຍບາຍດ້ານພາສີ, ສ່ວຍສາອາກອນກ່ຽວກັບການນຳເຂົ້າ ແລະ ສົ່ງອອກແມ່ນຈະປະຕິບັດຕາມຂໍ້ກຳນົດຂອງກົດ ໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**2) ນະໂຍບາຍສົ່ງເສີມການນຳໃຊ້ທີ່ດິນ**

ຜູ້ພັດທະນາເຂດ ມີສິດນຳໃຊ້ທີ່ດິນ ໃນເຂດເສດຖະກິດພິເສດ ແລະ ມີສິດນຳເອົາສິດດັ່ງກ່າວໃຫ້ເຊົ່າຕໍ່,ມອບ, ໂອນໃຫ້ຜູ້ລົງທຶນຕາມອາຍຸສັນຍາພັດທະນາ ພາຍຫຼັງທີ່ໄດ້ພັດທະນາສຳເລັດຢ່າງໜ້ອຍສີ່ສິບຫ້າສວ່ນຮ້ອຍ (45%) ຂອງແຜນພັດທະນາໃນແຕ່ລະໄລຍະຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດການພັດທະນາ ໂດຍມີການຢັ້ງຢືນຂອງຄະ ນະຄຸ້ມຄອງເຂດ.

**3) ນະໂນຍາຍສົ່ງເສີມດ້ານອື່ນໆ**, ຜູ້ພັດທະນາເຂດໄດ້ຮັບນະໂຍບາຍຊ່ວຍໜູນການລົງທຶນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ຜູ້ພັດທະນາຈະໄດ້ຮັບນະໂຍບາຍສົ່ງເສີມເພີ່ມເຕີມ ບົນພື້ນຖານການເຈລະຈາ ແລະ ການຕົກລົງໃນສັນຍາໂດຍອີງຕາມເງື່ອນໄຂ, ທີ່ຕັ້ງ, ຈຸດພິເສດ ເປັນຕົ້ນແມ່ນເຂດຫ່າງໄກຊອກຫຼີກ, ກິດຈະການທີ່ລັດຖະບານສົ່ງເສີມພິເສດ.